**ມິຊຊາອາທິດທີ 1 ກໍານົດພຣະກຣິສຕະຄົມ**

**ວັນທີ 29 ພະຈິກ 2020**



**ພຣະວໍລະສານໂດຍນັກບຸນມັກໂກ 13, 33-37**

ໃນເວລານັ້ນ, ພຣະເຢຊູເຈົ້າກ່າວກັບພວກລູກສິດວ່າ: "ຈົ່ງເຝົ້າລະວັງໃຫ້ດີເຖີດ, ຍ້ອນພວກເຈົ້າບໍ່ຮູ້ວ່າເວລານັ້ນຈະມາຮອດຍາມໃດ. ປຽບເໝືອນບຸລຸດຜູ້ໜຶ່ງອອກເດີນທາງໄກ, ເມື່ອຈະອອກຈາກເຮືອນໄປ, ລາວໄດ້ມອບວຽກໃຫ້ພວກຄົນໃຊ້ທຸກຄົນທໍາແລະສັ່ງຍາມປະຕູໃຫ້ເຝົ້າລະວັງ. ດັ່ງນັ້ນພວກເຈົ້າຈົ່ງເຝົ້າລະວັງເຖີດ, ຍ້ອນພວກເຈົ້າບໍ່ຮູ້ຈັກວ່າເຈົ້າເຮືອນຈະກັບມາເວລາໃດ; ຈະແມ່ນຍາມຄໍ່າ, ຍາມທ່ຽງຄືນ, ຍາມໄກ່ຂັນຫລືຍາມເຊົ້າກໍບໍ່ຮູ້, ຢ້ານວ່າເຈົ້າເຮືອນຈະມາຮອດໂດຍພວກເຈົ້າບໍ່ທັນຮູ້ເນື້ອຕົວແລະເຫັນພວກເຈົ້ານອນຫລັບຢູ່.

ສິ່ງທີ່ເຮົາບອກພວກເຈົ້ານີ້ ເຮົາກໍບອກແກ່ທຸກຄົນວ່າ: "ຈົ່ງເຝົ້າລະວັງເຖີດ".

ນີ້ແມ່ນວາຈາຂອງພຣະຄຣິສໂຕເຈົ້າ

**ບົດແບ່ງປັນ: ມກ 13, 33-37**

ວັນນີ້ພວກເຮົາກ້າວເຂົ້າສູ່ປີພິທີກຳໃໝ່ໃນບັນຍາກາດແຫ່ງການລໍຖ້າເຫດການສຳຄັນທີ່ຈະມາເຖິງ ອັນແມ່ນການສະເດັດກັບມາອີກຄັ້ງໜຶ່ງຂອງພຣະເຢຊູກຣິສໂຕເຈົ້າ. ພຣະອົງໄດ້ສະເດັດມາແລ້ວທີ່ເມືອງເບັດເລແຮມສອງພັນປີທີ່ຜ່ານມາ. ພຣະອົງກໍຍັງສືບຕໍ່ສະເດັດມາຢູ່ທ່າມກາງພວກເຮົາໃນທຸກວັນນີ້. ແລະພຣະອົງຍັງຈະສະເດັດກັບມາອີກຄັ້ງໜຶ່ງໃນສີມຸງຄຸນຂອງພຣະອົງ.

ແຕ່ລະປີ, ພຣະກຣິສຕະຈັກໃຫ້ພວກເຮົາມີໂອກາດລໍຖ້າການສະເດັດກັບມາຂອງພຣະເຢຊູເຈົ້າ, ຊ່ວງເວລານີ້ພວກເຮົາຮຽກວ່າ: ກຳນົດພຣະກຣິສຕະຄົມ. ເປັນຊ່ວງເວລາສີ່ອາທິດກ່ອນວັນພຣະເຢຊູເຈົ້າບັງເກີດ. ແຕ່ພວກເຮົາຈະລໍຖ້າການສະເດັດມາຂອງພຣະເຢຊູເຈົ້າຢ່າງໃດ? ວາຈາພຣະເຈົ້າໃນຊ່ວງສີ່ອາທິດນີ້ຈະຊ່ວຍພວກເຮົາໃຫ້ກະກຽມຈິດໃຈຢ່າງດີເພື່ອສົມຈະໄດ້ຕ້ອນຮັບພຣະເຢຊູເຈົ້າຜູ້ເປັນ "ແອມມານູແອນ" ອັນມີຄວາມໝາຍ ພຣະເຈົ້າສະຖິດຢູ່ທ່າມກາງພວກເຮົາແລະໃນໃຈພວກເຮົາແຕ່ລະຄົນ.

ວັນອາທິດທີໜຶ່ງແຫ່ງກຳນົດພຣະກຣິສຕະຄົມນີ້, ວາຈາພຣະເຈົ້າເຊື້ອເຊີນພວກເຮົາໃຫ້ຕື່ນເຝົ້າຢູ່ສະເໝີ ຍ້ອນພວກເຮົາບໍ່ຮູ້ຈັກວັນເວລາທີ່ພຣະອົງຈະສະເດັດກັບມາ. ການຕື່ນເຝົ້ານີ້ບໍ່ແມ່ນການລໍຖ້າໂດຍບໍ່ກະທຳສິ່ງໃດເລີຍ, ແຕ່ແມ່ນການທຳໜ້າທີ່ຊຶ່ງພຣະເຈົ້າໄດ້ມອບໝາຍໃຫ້ພວກເຮົາໃຫ້ສຳເລັດ. ການຕື່ນເຝົ້າກໍບໍ່ແມ່ນການລໍຖ້າດ້ວຍຄວາມຢ້ານກົວ, ແຕ່ແມ່ນການຕຽມພ້ອມດ້ວຍຄວາມຍິນດີ. ເພາະພຣະເຢຊູເຈົ້າຜູ້ຈະສະເດັດມານີ້, ພຣະອົງບໍ່ໄດ້ມາເພື່ອຕັດສິນພວກເຮົາ ແຕ່ພຣະອົງມາເພື່ອນຳຄວາມຣອດແລະສັນຕິສຸກມາໃຫ້ພວກເຮົາ. ດັ່ງໃນບົດອ່ານທີໜຶ່ງຈາກໜັງສືຂອງປະພາສົກອີຊາຢາກ່າວວ່າ: ເຖິງວ່າພວກເຮົາຈະເປັນຄົນບາບ, ຈະທຳຜິດຕໍ່ພຣະອົງແຕ່ພຣະອົງກໍຍັງມາເພື່ອຊ່ວຍພວກເຮົາ, ເພື່ອນຳຄວາມຣອດມາໃຫ້ພວກເຮົາ. ນີ້ແລແມ່ນຂ່າວດີສຳລັບພວກເຮົາໃນກຳນົດພຣະກຣິສຕະຄົມນີ້, ແມ່ນເຫດຜົນທີ່ພວກເຮົາລໍຖ້າການສະເດັດກັບມາຂອງພຣະເຢຊູເຈົ້າ.

**ພາວະນາ**

ໂອພຣະເຢຊູເຈົ້າ, ໃນວັນອາທິດທີໜຶ່ງແຫ່ງການລໍຖ້າການສະເດັດກັບມາຂອງພຣະອົງນີ້ ຂໍໃຫ້ລູກໄດ້ເຂົ້າໃຈເຖິງການສະເດັດມາຂອງພຣະອົງ ເພື່ອຈະໄດ້ຕື່ນເຝົ້າລໍຖ້າພຣະອົງ. ຍ້ອນພຣະອົງມາເພື່ອນຳຄວາມຣອດແລະສັນຕິສຸກຂອງພຣະອົງມາໃຫ້ໂລກ, ມາໃຫ້ລູກນັ້ນແລ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ